ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 169 /ຫກ
ນະຄອນຫລວງວຽງຈັນ, ວັນທີ 24 FEB 2015

# ແຈ້ງການ

ເຖິງ: ບັນດາກົມ ແລະ ທຽບເທົ່າກົມ ທະນາຄານແຫ່ງ ສປປ ລາວ,

ເລື່ອງ: ການນຳໃຊ້ Email ສະເພາະຂອງ ທຫລ ໃນການຮັບສົ່ງເອກະສານພາຍໃນ ທຫລ.

- ອີງຕາມ ທິດຊີ້ນຳຂອງທ່ານຮອງຜູ້ວ່າການ ທຫລ ໃນການສົ່ງເສີມຫຼຸດຜ່ອນການນຳໃຊ້ເຈ້ຍໃຫ້ໜ້ອຍລົງ.
- ອີງຕາມການຄົ້ນຄວ້າ ແລະ ນຳສະເໜີຂອງກົມເຕັກໂນໂລຊີ ຂໍ້ມູນຂ່າວສານ.

ເພື່ອເຮັດໃຫ້ການສື່ສານ ແລະ ຮັບສົ່ງເອກະສານພາຍໃນ ທຫລ ມີຄວາມສະດວກວ່ອງໄວຂຶ້ນ, ຫ້ອງການ ທະນາຄານ ແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ນັບຕັ້ງແຕ່ວັນທີ 2 ມີນາ 2015 ເປັນຕົ້ນໄປ, ການນຳສົ່ງບົດລາຍງານປະຈຳອາທິດ, ປະຈຳເດືອນ ແລະ ບັນດາເອກະສານຕ່າງໆ ໃຫ້ກັນລະຫວ່າງບັນດາກົມ ແລະ ທຽບເທົ່າກົມ ພາຍໃນ ທຫລ ແມ່ນໃຫ້ສົ່ງດ້ວຍລະບົບ Email ພາຍໃນຂອງ ທຫລ (http://pmail.bolnet.gov.la/webmail) ທີ່ທາງກົມເຕັກໂນໂລຊີ ຂໍ້ມູນຂ່າວສານ ໄດ້ສ້າງຂຶ້ນມາຮັບໃຊ້ພາຍໃນ ທຫລ ສະເພາະ ແລະ ໄດ້ມີການຈັດຝຶກອົບຮົມໃຫ້ບັນດາກົມຕ່າງໆແລ້ວ ໃນວັນທີ່ 8 ກໍລະກົດ 2014 ທີ່ຜ່ານມາ.

ພະນັກງານທີ່ຮັບຜິດຊອບວຽກງານເອກະສານຂອງບັນດາກົມ ແລະ ທຽບເທົ່າກົມ ພາຍໃນ ທຫລ ຕ້ອງຖືເປັນສຳຄັນ ແລະ ເອົາໃຈໃສ່ຕິດຕາມກວດກາ Email ຂອງກົມຢ່າງເປັນປະຈຳ. ສຳລັບລາຍລະອຽດຂອງຄູ່ມືໃນການນຳໃຊ້ Email ແມ່ນກົມເຕັກໂນໂລຊີ ຂໍ້ມູນຂ່າວສານໄດ້ມີການແຈກຢາຍໃຫ້ແຕ່ລະກົມໃນໄລຍະທີ່ມີການຝຶກອົບຮົມແລ້ວ ຫຼື ຖ້າຫາກວ່າທ່ານຕ້ອງການຄູ່ມືນັ້ນໃໝ່ ໃຫ້ປະສານກັບກົມເຕັກໂນໂລຊີ ຂໍ້ມູນຂ່າວສານ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການນີ້ດ້ວຍ.

ຮອງແທນ ຫົວໜ້າຫ້ອງການ ທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ອຸດຕະລາ ແກ້ວທາວົງ